# ໓໑
# ໜັງສືຣຶດ

ໃຈຄວາມສຳຄັນ ຄວາມໄຖ່

ຂໍ້ຄວາມສຳຄັນ ບົດ ໔:໑໔

ຈຳນວນບົດ ໔ ບົດ

## ໑. ຄຳນຳ

ໜັງສືນີ້ ໄດ້ຂຽນ ເຣື່ອງ ທີ່ເກີດຂຶ້ນ ໃນຄາວ ຂອງພວກ ຜູ້ປົກຄອງ (ພວກຜູ້ຕັດສິນ) ຄືເມື່ອເວລາພວກອິສຣາເອັນກຳລັງໝົດຄວາມເຊື່ອໝັ້ນ ມີແຕ່ນ້ອຍຄົນຍັງນັບຖືພຣະເຈົ້າ

## ໒. ເນື້ອຄວາມ

ໃນໜັງສືນີ້ ເຮົາເຫັນພຣະຄຸນ ຂອງພຣະເຈົ້າ ດ້ວຍການໄຖ່ນາງຣຶດ ເພິ່ນໄດ້ເຂົ້າໃນຊາດອິສຣາເອັນ ແລະເປັນຍ່າຂອງກະສັດດາວິດແລະພຣະເຢຊູ (໔:໑໗; ມັດທາຍ ໑:໕)

## ໓. ຂໍ້ປຽບທຽບ

ກ. ນາງໂອຣາຟາ ຜູ້ນັບຖືຮູບເຄົາຣົບແລະຮັກປະເທດຂອງຕົນ ກໍປຽບເຖິງບຸກຄົນທີ່ຮັກຊັບສົມບັດໃນໂລກນີ້ກວ່າຊັບສົມບັດໃນສວັນ (໔ ຕີໂມເຕ ໔:໑໐)

ຂ. ນາງຣຶດຜູ້ສັດຊື່ ຜູ້ຍອມໜີຈາກປະເທດແລະຍາດຕິພີ່ນ້ອງຂອງຕົນໄປນົບອຣະບັດພຣະເຈົ້າ ປຽບເຖິງບຸກຄົນທີ່ໄດ້ຕັດ

ສົມໃຈເຊື່ອພຣະເຢຊູຄຣິດ (ຟີລິບ ມ:໘) ຜູ້ນັ້ນຈະໄດ້ຮັບສິ່ງຂອງຫລາຍກວ່າເກົ່າອີກ (ໂກໂລດ ໔:໑໐)

ຄ. ນາງນາໂອມີ ຜູ້ປະຖິ້ມພຣະເຈົ້າພີໄປຢູ່ທ່າມກາງພວກສັດຕູ ປຽບເຖິງບຸກຄົນໄດ້ຫລົງທາງ ອັນນຶ່ງໃນພັງສືນີ້ຍັງໄດ້ສະແດງຄວາມຮັກຄວາມພຽນແລະຄວາມເມດຕາຂອງພຣະເຈົ້າ ແລະພຣະອົງຊົງໂຜດໃຫ້ເກີດຄວາມຍິນດີຈາກສິ່ງທີ່ບໍ່ດີດ້ວຍ.

໔. ວ່າດ້ວຍການປຽບທຽບ

ກ. ທ່ານໂບອາດ ເປັນເໝືອນສພາບຂອງພຣະເຢຊູເອງຄື

໑. ເປັນຜູ້ມີອຳນາດ ໒:໑ ປຽບກັບ ມັດທາຍ ໒໘:໑໘

໒. ເປັນເຈົ້າແຫ່ງການເກັບກ່ຽວ ໒:໓

ປຽບກັບ ມັດທາຍ ໙:໓໘

໓. ເປັນຜູ້ໄຖ່ໃຫ້ພົ້ນ ໓:໙

ປຽບກັບ ມາຣະໂກ ໑໐:໔໕

໔. ຜູ້ໂຜດໃຫ້ມີອາຫານການກິນ ໒:໙–໑໔

ປຽບກັບ ໂຍຮັນ ໗:໓໗; ໖:໓໕

໕. ຜູ້ໂຜດໃຫ້ມີການພັກຜ່ອນ ໓:໑

ປຽບກັບ ມັດທາຍ ໑໑:໒໘

໖. ເປັນເຈົ້າບ່າວ ໔:໑໓ ປຽບກັບ ເອເຟດ ໕:໒໕

໑. ມີພີ່ນ້ອງຜູ້ນຶ່ງທີ່ມີສິດຈະເອົານາງຣຶດເປັນເມັຍ ແຕ່ເພິ່ນບໍ່ເອົາເພາະບໍ່ສາມາດຈະຊ່ອຍນາງຣຶດໄດ້ (໓:໑໒; ໔:໖) ເຣື່ອງນີ້ປຽບເໝືອນກັບພຣະບັນຍັດທີ່ບໍ່ສາມາດຈະຊ່ອຍຄົນບາບໃຫ້ພົ້ນໄດ້

໒. ທ່ານໂບອາດ ຜູ້ຍິນດີໄຖ່ເອົານາງຣຶດປຽບເໝືອນພຣະເຢຊູ ຜູ້ຊົງກະທຳໃຫ້ສຳເຣັດ ຊຶ່ງພຣະບັນຍັດຊ່ອຍພວກເຮົາໃຫ້ພົ້ນບໍ່ໄດ້

໓. ນາງຣຶດ ຜູ້ບໍ່ແມ່ນຊາວອິສຣາເອັນແຕ່ໄດ້ເຊື່ອ ປຽບເຖິງຊາວຕ່າງປະເທດທີ່ເຊື່ອທັງຫລາຍ (ໂຣມ ໓:໒໔–໒໖, ເອເຟດ ໒:໑໓–໑໙)

## ໕. ການແບ່ງເປັນພາກ

ພາກທີ ໑ ໃນປະເທດໂມອາບ (ນາງຣຶດຕັດສິນໃຈວ່າຈະໄປກັບຍ່າແລະເຊື່ອພຣະເຈົ້າ)

ພາກທີ ໒ ໃນທົ່ງນາທີ່ເບດເລເຫມ (ທ່ານໂບອາດເປັນຜູ້ຊ່ອຍຄົນຕ່າງປະເທດ

ພາກທີ ໓ ໃນລານເຂົ້າ (ທ່ານໂບອາດເປັນຜູ້ສັດຊື່)

ພາກທີ ໔ ທີ່ປະຕູເມືອງ (ທ່ານໂບອາດເປັນຜູ້ໄຖ່ເອົານາງຣຶດແລ້ວເອົາເປັນເມັຍ)

# ບັນຊີທົບທວນເລື່ອງທີ່ໄດ້ອະທິບາຍມາແລ້ວ

| ໜັງສື | ທີ່ຢູ່ | ຣະຫວ່າງ ເວລາ | ໝາຍເຫດ |
|---|---|---|---|
| ອົພຍົກ ບົດ ໑–໑໘ | ເມືອງເອຢິບ | ໔໐໐ ປີ | ເປັນທາດຂອງພວກເອຢິບ ບໍ່ມີບ່ອນຂາບໄຫວ້ພຣະເຈົ້າ |
| ບົດ ໑໓–໑໙ | ໜີຈາກເມືອງເອຢິບ ໄປເຖິງພູເຂົາຊີນາຍ | | |
| ບົດ ໒໐–໔໐ | ພູເຂົາຊີນາຍ | ໑ ປີ | ສ້າງບ່ອນຂາບໄຫວ້ພຣະເຈົ້າ |
| ຣະບຽບ ພວກເລວີ | ພູເຂົາຊີນາຍ | | ຄຳສັ່ງຂອງພຣະເຈົ້າຊົງ ໃຫ້ໂອວາດ |
| ຈົດເຊັນບັນຊີ ບົດ໑-໑໐ | ພູເຂົາຊີນາຍ | | ຕຽມຕົວອອກເດີນທາງ |
| ບົດ ໑໑–໓໖ | ໃນກາງປ່າ | ໓໘ ປີ | ທຽວໄປມາຢູ່ປ່າດິນຊາຍ |
| ພຣະບັນຍັດ ທີ ໒ | ຢຸດພັກທີ່ຮາບ ໂມອາບ | | ເມື່ອຟັງຄຳສັ່ງສອນຂອງພຣະອົງ ກ່ອນຈະເຂົ້າປະເທດການາອານ |
| ໂຢຊວຍ | ເຂົ້າເມືອງການາອານ | ໒໕ ປີ | ຕໍ່ສູ້ກັນແລະຕັ້ງເປັນບ້ານເມືອງ |
| ພວກຜູ້ ຕັດສິນ | ຢູ່ເມືອງການາອານ | ໔໕໐ ປີ | ພວກຜູ້ປົກຄອງເປັນຜູ້ແນະນຳ |